**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 308 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 31.03.2021

# ແຈ້ງການ

ຮຽນ: - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.

- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງທົ່ວປະເທດ ທີ່ນັບຖື.

ເລື່ອງ: ການສືບຕໍ່ປະຕິບັດບັນດາມາດຕະການຜ່ອນຜັນ, ມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະເດືອນເມສາ ຫາ ເດືອນພຶດສະພາ 2021.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 3 ມີນາ 2017;
- ອີງຕາມ ຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020.
- ອີງຕາມເອກະສານລາຍງານຂອງຄະນະສະເພາະກິດ ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ສະບັບເລກທີ 3360, ລົງວັນທີ 19 ມີນາ 2021.
- ອີງຕາມການຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ໃນຄັ້ງວັນທີ 31 ມີນາ 2021.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນຳຂອງ ທ່ານ ນາຍົກລັດຖະມົນຕີ ມາຍັງທ່ານ ຊາບ ດັ່ງນີ້:

**1.** ເຫັນດີໃຫ້ສືບຕໍ່ປະຕິບັດມາດຕະການຜ່ອນຜັນ ກໍ່ຄືມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ **COVID-19** ຄືກັນກັບທີ່ໄດ້ປະຕິບັດໃນເດືອນກຸມພາ ແລະ ມີນາ **2021** ຕາມທີ່ໄດ້ລະບຸໃນແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ **1414/ຫສນຍ**, ລົງວັນທີ **23** ທັນວາ **2020** ແລະ ເລກທີ **111/ຫສນຍ**, ລົງວັນທີ **01** ມີນາ **2021** ຢ່າງເຂັ້ມງວດ ເລີ່ມແຕ່ວັນທີ **01** ເມສາ **- 31** ພຶດສະພາ **2021**.

**2.** ສຳລັບໃນໄລຍະສະເຫຼີມສະຫຼອງບຸນປີໃໝ່ລາວ ໃຫ້ປະຕິບັດຕາມແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ **286/ຫສນຍ**, ລົງວັນທີ **25** ມີນາ **2021**.

**3.** ມອບໃຫ້ຄະນະສະເພາະກິດ ສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຕ່າງໆ ສືບຕໍ່ກະກຽມຄວາມພ້ອມຮອບດ້ານທາງດ້ານບຸກຄະລາກອນ, ອຸປະກອນ, ສະຖານທີ່ ແລະ ງົບປະມານ ເພື່ອຮອງຮັບການລະບາດທີ່ອາດຈະເກີດໃນຕໍ່ໜ້າ ແລະ ສືບຕໍ່ສັກວັກຊີນກັນ COVID-19 ໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້. ພ້ອມກັນນີ້, ກໍໃຫ້ແກ້ໄຂຂໍ້ຄົງຄ້າງຕ່າງໆ ໃນການປະຕິບັດວຽກງານປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະຜ່ານມາ ເພື່ອຮັບປະກັນບໍ່ໃຫ້ມີການລະບາດຢູ່ພາຍໃນ.

**4.** ມອບໃຫ້ຄະນະສະເພາະກິດ ສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຕ່າງໆ ສືບຕໍ່ໂຄສະນາເຜີຍແຜ່ໃຫ້ປະຊາຊົນບັນດາເຜົ່າໃນທົ່ວປະເທດ ເພີ່ມທະວີຄວາມເອົາໃຈໃສ່ປະຕິບັດມາດຕະການຕ່າງໆ ທີ່ຄະນະສະເພາະກິດ ວາງອອກໃນແຕ່ລະໄລຍະ ຢ່າງເຂັ້ມງວດ ເປັນຕົ້ນ ການຮັກສາໄລຍະຫ່າງ, ລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມື, ໃສ່ຜ້າອັດປາກ-ດັງ, ວັດອຸນຫະພູມ ແລະ ອະນາໄມສະຖານທີ່. ພ້ອມນີ້, ກໍໃຫ້ເປັນເຈົ້າການຕິດຕາມ ຜູ້ທີ່ເຂົ້າປະເທດເຮົາແບບ

ຜິດກົດໝາຍ ແລະ ໄປເຄື່ອນໄຫວໃນຊຸມຊົນຕ່າງໆ ແລະ ແຈ້ງໃຫ້ອົງການປົກຄອງທ້ອງຖິ່ນຊາບ ເພື່ອດຳເນີນການແກ້ໄຂຕາມລະບຽບການຕ່າງໆ ທີ່ກຳນົດໄວ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ຄຳເຈນ ວົງໂພສີ

ບ່ອນນຳສົ່ງ:

| | |
|---|---|
| - ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ບັນດາສະມາຊິກລັດຖະບານ, ທ່ານລະ | 01 ສະບັບ |
| - ອົງການຈັດຕັ້ງພັກ, ບ່ອນລະ | 01 ສະບັບ |
| - ສູນກາງແນວລາວສ້າງຊາດ | 01 ສະບັບ |
| - ອົງການຈັດຕັ້ງມະຫາຊົນ ບ່ອນລະ | 01 ສະບັບ |
| - ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ |
| - ຄະນະ ຮສນບ, ທ່ານລະ | 01 ສະບັບ |
| - ສຳເນົາ | 01 ສະບັບ |